ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 1169-ອ/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 23 MAR 2026

ໜັງສືລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ,
ບັນດາທ່ານຜູ້ຖືຮຸ້ນຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 01/2026.

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ 01/2026, ວັນທີ 20 ມີນາ 2026 ມີລາຍລະອຽດລຸ່ມນີ້:

1. ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ, ລວມທັງບົດລາຍງານການເງິນ ປະຈຳປີ 2025 ແລະ ໃຫ້ນຳເອົາເລື່ອງດັ່ງກ່າວສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ເພື່ອພິຈາລະນາຮັບຮອງ.
2. ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນວັນທີ **30 ເມສາ 2026** ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການໄດ້ຮັບເງິນປັນຜົນໃນອັດຕາ **50 ກີບຕໍ່ຮຸ້ນ**, ລວມເປັນເງິນປັນຜົນທີ່ຕ້ອງຈ່າຍ 84,445 ລ້ານກີບ, ກຳນົດວັນຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ໃນວັນທີ **29 ພຶດສະພາ 2026** ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ເພື່ອພິຈາລະນາຮັບຮອງ.
3. ອະນຸມັດ ການແຕ່ງຕັ້ງກຳມະການສະພາບໍລິຫານ ທີ່ຄົບອາຍຸການ 01 ທ່ານ, ດັ່ງມີລາຍຊື່ລຸ່ມນີ້:
   1) ທ່ານ ຊົນລະວິດ ວິນິດໄສ, ກຳມະການສະພາບໍລິຫານ, ຕາງໜ້າຈາກບໍລິສັດຮາຊ-ລາວ ຈຳກັດ ສືບຕໍ່ດຳລົງອາລະອີກ 01 ສະໄໝ (2 ປີ) ໂດຍເລີ່ມນັບແຕ່ມື້ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ເປັນຕົ້ນໄປ ແລະ ໃຫ້ນຳເລື່ອງດັ່ງກ່າວສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ເພື່ອພິຈາລະນາຮັບຮອງ.
4. ອະນຸມັດ ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ທີ່ຈະຈັດຂຶ້ນໃນວັນທີ 29 ເມສາ 2026, ມີລາຍລະອຽດດັ່ງນີ້:
   ວາລະທີ 1: ພິຈາລະນາຮັບຮອງ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024.
   ວາລະທີ 2: ພິຈາລະນາຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ລວມທັງບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2025.
   ວາລະທີ 3: ພິຈາລະນາຮັບຮອງ ແຜນການດຳເນີນທຸລະກິດປະຈຳປີ 2026.
   ວາລະທີ 4: ພິຈາລະນາຮັບຮອງ ການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2025.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ຕູ້ ປ. ນ. 2392, ໂທລະສັບ: (856-21) 316 142, ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ວາລະທີ 5: ພິຈາລະນາຮັບຮອງ ການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ 6 ເດືອນຕົ້ນປີ.

ວາລະທີ 6: ພິຈາລະນາຮັບຮອງ ການແຕ່ງຕັ້ງກຳມະການສະພາບໍລິຫານ 01 ທ່ານທີ່ຈະຄົບອາຍຸການ.

ວາລະທີ 7: ພິຈາລະນາຮັບຮອງ ການດັດແກ້ກົດລະບຽບບໍລິສັດ (ສະບັບປັບປຸງຄັ້ງທີ 16).

ວາລະທີ 8: ພິຈາລະນາຮັບຮອງ ຄ່າຕອບແທນຂອງສະມາຊິກສະພາບໍລິຫານ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ຮຽນມາດ້ວຍຄວາມນັບຖື,

ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈູມຄຳ